Media Release

ສາມາດອອກຂ່າວໄດ້ທັນທີ

# ຄວາມໝັ້ນຄົງທາງນ້ຳ ໃນພາກພື້ນແມ່ນ້ຳຂອງ ແລະ ອາຊຽນ ເປັນກຸນແຈສຳຄັນສູ່ ອະນາຄົດທີ່ຫມັ້ນຄົງ ແລະ ຍືນຍົງ

**ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 24 ສິງຫາ 2021** – ໃນອາທິດທີ່ຜ່ານມາ ກອງປະຊຸມຄວາມໝັ້ນຄົງທາງນ້ຳ ອາຊຽນ-ຄມສ ຄັ້ງປະຖົມມະລືກ ໄດ້ຖືກຈັດຂຶ້ນ ເພື່ອປຶກສາຫາລື 3 ທາງອອກສຳຄັນ ທາງດ້ານ ນະໂຍບາຍ, ເທັກໂນໂລຢີ ແລະ ການຮ່ວມມື ເພື່ອຊອກຫາວິທີການແກ້ໄຂບັນຫາທ້າທາຍ ຕໍ່ ຄວາມໝັ້ນຄົງທາງນ້ຳ ໃນພາກພື້ນແມ່ນ້ຳຂອງ ແລະ ໃນທົ່ວທັງອາຊຽນ.

ທ່ານ ພອນປະເສີດ ພູລີພັນ, ວ່າການປະທານ ຄະນະກຳມະການຮ່ວມ ຄມສ ສຳລັບປີ 2021 ໄດ້ກ່າວວ່າ “ໃນທ່າມກາງສະພາບອາກາດ ແລະ ອຸທົກກະສາດ ທີ່ກຳລັງປ່ຽນແປງໄປໃນທົ່ວໂລກນີ້, ມັນມີຄວາມຈຳເປັນອັນຮີບດ່ວນ ໃນການຊອກຫາວິທີທາງທີ່ຍືນຍົງ ເພື່ອໃຫ້ພາກພື້ນນີ້ ມີຄວາມໝັ້ນຄົງທາງດ້ານນ້ຳ,” ທ່ານກ່າວຕື່ມອີກວ່າ “ການແກ້ໄຂບັນຫາທ້າທາຍ ຮຽກຮ້ອງເຖິງ ການນຳພາ, ນະວັດຕະກຳໃໝ່ໆ ແລະ ການຮ່ວມມືຍຸດທະສາດ ລະຫວ່າງບັນດາປະເທດໃນພາກພື້ນ ແລະ ບັນດາຄູ່ຮ່ວມງານ.”

ໃນລະດັບນະໂຍບາຍນັ້ນ, ບັນດາພະນັກງານອາວຸດໂສ ແລະ ຜູ້ຊ່ຽວຊານຕ່າງໆ ໄດ້ຮຽກຮ້ອງໃຫ້ທຸກໆພາກສ່ວນ ແລະ ຜູ້ປະຕິບັດງານທັງໝົດ ຕ້ອງສົ່ງເສີມຄວາມໂປ່ງໃສ ແລະ ການມີສ່ວນຮ່ວມຢ່າງເລິກເຊິ່ງ ໃນການສົ່ງເສີມ ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງກັບນ້ຳ ຢ່າງຍືນຍົງ ໃນພາກພື້ນອາຊຽນ.

ນະໂຍບາຍ ແລະ ການປະຕິຮູບສະຖາບັນ ຢ່າງຕໍ່ເນື່ອງ ທີ່ສົ່ງເສີມ ການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານນັ້ນ ແມ່ນມີຄວາມຈຳເປັນ ໂດຍອີງຕາມ ບົດສະຫຼຸບຂອງກອງປະຊຸມ 2 ວັນເຕັມ ໃນວັນສຸກຜ່ານມານີ້. ນອກຈາກນັ້ນແລ້ວ ກອງປະຊຸມກໍ່ຍັງໄດ້ຮຽກຮ້ອງເຖິງ ການເຊື່ອມສານລະດັບພາກພື້ນ ແລະ ລະດັບທ້ອງຖິ່ນ ໃຫ້ຫຼາຍຂຶ້ນກວ່າເກົ່າ ໂດຍສະເພາະແມ່ນ ໃນຂົງເຂດຂອງ ການວາງແຜນຊັບພະຍາກອນນ້ຳ, ການຄຸ້ມຄອງມົນລະພິດ, ການພະຍາກອນ ແລະ ການແຈ້ງເຕືອນລ່ວງໜ້າ ແລະ ການປູກຈິດສຳນຶກ.

ເທັກໂນໂລຢີ ກໍ່ມີບົດບາດສຳຄັນເຊັ່ນກັນ. ເຄື່ອງມືດິຈິຕອລ ແລະ ເຄື່ອງມືສ້າງແບບຈຳລອງທັນສະໄໝ ເຊັ່ນວ່າ ເທັກໂນໂລຢີ ປັນຍາປະດິດ ແລະ ເທັກໂນໂລຢີ digital twins ໃນປະຈຸບັນນີ້ ເຫັນໄດ້ວ່າ ເປັນທາງອອກທີ່ເກີດປະໂຫຍດສູງສຸດໃນການຄຸ້ມຄອງ ຖານຂໍ້ມູນຊັບພະຍາກອນນ້ຳ ໃນລະດັບພາກພື້ນ. ເຄື່ອງມືເຫລົ່ານີ້ ຍັງຈະຊ່ວຍສົ່ງເສີມ ຄວາມຊຳນານໃນທ້ອງຖິ່ນ ເພື່ອຈັດການຄວາມສ່ຽງ ທີ່ກ່ຽວຂ້ອງກັບນ້ຳ ເຊິ່ງລວມທັງ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ພ້ອມທັງປັບປຸງຄຸນນະພາບ ແລະ ປະລິມານຂອງ ນ້ຳໃນອ່າງເກັບນ້ຳ ອີກດ້ວຍ.

ບັນດາຜູ້ແທນ ຍັງໄດ້ແນະນຳໃຫ້ຊັກຊວນ ບັນດາສະຖາບັນຕ່າງໆ ໃຫ້ເຂົ້າມາມີສ່ວນຮ່ວມ ແລະ ໃຫ້ນຳໃຊ້ຮູບແບບການຮ່ວມມື ລັດ-ເອກະຊົນ ໃຫ້ຫຼາຍຂຶ້ນກວ່າເກົ່າ. ການມີສ່ວນຮ່ວມຢ່າງເລິກເຊິ່ງ ກັບຂະແໜງການເອກະຊົນ ຈະສາມາດສະໜັບສະໜູນ ບັນດາລັດຖະບານປະເທດອາຊຽນ ໃຫ້ເຂົ້າເຖິງ ເທັກໂນໂລຢີໃໝ່ໆ, ໃນຂະນະທີ່ ການຮ່ວມມືລະດັບພາກ

ພື້ນ ທີ່ໜັກແໜ້ນກວ່າເກົ່ານັ້ນ ຈະຊ່ວຍອຳນວຍຄວາມສະດວກໃຫ້ ມີການແລກປ່ຽນ ຄວາມຮູ້ຄວາມຊຳນານ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ສົ່ງເສີມໃຫ້ມີການລົງທຶນຢ່າງຍືນຍົງ.

ທ່ານ ກຸງ ພວກ, ຮອງເລຂາທິການໃຫຍ່ອາຊຽນ ສຳລັບ ປະຊາຄົມເສດຖະກິດ-ວັດທະນາທຳອາຊຽນ ໄດ້ກ່າວວ່າ "ການປົກປ້ອງຊັບພະຍາກອນນ້ຳ ໃນພາກພື້ນນີ້ ແມ່ນເປັນສ່ວນໜຶ່ງຂອງ ວຽກງານຂອງອາຊຽນ ໃນໄລຍະຫຼາຍປີຜ່ານມາ,". ທ່ານ ກຸງ ຍັງໄດ້ເນັ້ນໜັກໃຫ້ເຫັນເຖິງ ຄຸນຄ່າຂອງການສົ່ງເສີມ ການຮ່ວມມືລະດັບພາກພື້ນ ແລະ ການຮັດແໜ້ນສາຍພົວພັນລະຫວ່າງ ບັນດາປະເທດອາຊຽນ ເພື່ອຈັດການກັບ ປະເດັນຕ່າງໆກ່ຽວກັບນ້ຳ ທີ່ກຳລັງເກີດຂຶ້ນ ເຊິ່ງລວມທັງ ການເຂົ້າເຖິງນ້ຳໃຊ້ ທີ່ປອດໄພ ແລະ ລາຄາບໍ່ແພງ, ມີນ້ຳພຽງພໍ ເພື່ອຮັບປະກັນ ຄວາມໝັ້ນຄົງດ້ານສະບຽງອາຫານ ເພື່ອສະໜັບສະໜູນ ເສດຖະກິດຂອງພາກພື້ນນີ້ ແລະ ມີທາງອອກທີ່ຍືນຍົງ ທີ່ສາມາດຫຼຸດຜ່ອນໄພອັນຕະລາຍ ທີ່ຕິດພັນກັບນ້ຳໄດ້.

ປະຊາຊົນຫຼາຍກວ່າ 70 ລ້ານຄົນ ເພິ່ງພາອາໄສ ແມ່ນ້ຳຂອງ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ເພື່ອເປັນແຫຼ່ງລາຍຮັບ ແລະ ແຫຼ່ງຫຼໍ່ລ້ຽງຊີວິດ. ແຕ່ວ່າ ປະເດັນຂ້າມຊາຍແດນ ທີ່ກຳລັງເພີ່ມຄວາມກົດດັນຂຶ້ນເລື້ອຍໆນັ້ນ ໄດ້ມາເຖິງຈຸດວິກິດແລ້ວ ໃນຫຼາຍພາກສ່ວນຂອງ ພາກພື້ນອາຊຽນ ເຊິ່ງມັນຮຽກຮ້ອງເຖິງ ຄວາມສາມັກຄີທີ່ເລິກເຊິ່ງ ແລະ ໜັກແໜ້ນຫຼາຍກວ່າເກົ່າ ເພື່ອປິດຊ່ອງຫວ່າງຂອງການພັດທະນານີ້.

ຄມສ ໄດ້ສ້າງແບບຈຳລອງ ໃນຫວ່າງບໍ່ດົນມານີ້ ກ່ຽວກັບ ຜົນກະທົບຂອງການພັດທະນາພາກພື້ນ ເຊິ່ງມັນໄດ້ສະແດງໃຫ້ເຫັນວ່າ ຄວາມເຊື່ອມໂຊມຂອງສິ່ງແວດລ້ອມ ມີຄວາມຫນັກໜ່ວງຂຶ້ນ ໃນໄລຍະ ຫຼາຍກວ່າ 25 ປີຜ່ານມາ ນັບຕັ້ງແຕ່ທີ່ໄດ້ສ້າງຕັ້ງ ຄມສ.

ຄຳແນະນຳຫຼາຍຂໍ້ ທີ່ໄດ້ສົນທະນາກັນ ໃນກອງປະຊຸມຄັ້ງນີ້ ສາມາດນຳມາປະກອບເປັນພື້ນຖານ ສຳລັບ ກົນໄກໃດໜຶ່ງໃນລະດັບພາກພື້ນ ເພື່ອຮັດແໜ້ນ ການສົນທະນາ ແລະ ການປະສານງານ. ການຈັດການກັບ ການບຸກລຸກຂອງມະນຸດ ແລະ ຄວາມແຕກໂຕນລະຫວ່າງປະເທດຕ່າງໆ ແມ່ນຮຽກຮ້ອງເຖິງ ການແລກປ່ຽນຂໍ້ມູນ ໃຫ້ໄດ້ຫຼາຍຂຶ້ນກວ່າເກົ່າ ພ້ອມທັງການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ທາງດ້ານການເງິນ ໃນກຸ່ມປະເທດອາຊຽນ ແລະ ບັນດາຄູ່ຮ່ວມພັດທະນາ.

ກອງປະຊຸມຄວາມໝັ້ນຄົງທາງນ້ຳ ອາຊຽນ-ຄມສ ຄັ້ງປະຖົມມະລຶກ ໃນຄັ້ງນີ້ ແມ່ນການສານຕໍ່ວຽກງານຈາກ ກອບການຮ່ວມມືລະຫວ່າງ ອາຊຽນ ແລະ ຄມສ ເຊິ່ງໄດ້ເຊັນກັນໃນປີ 2018. ກອງເລຂາ ຄມສ ແລະ ບັນດາປະເທດແມ່ນ້ຳຂອງຕອນລຸ່ມ ພ້ອມທັງບັນດາປະເທດສະມາຊິກອາຊຽນ ມີຄວາມມຸ້ງໝັ້ນ ທີ່ຈະບັນລຸຕາມຈຸດປະສົງຂອງ ສັນຍາແມ່ນ້ຳຂອງປີ 1995 ແລະ ວິໄສທັດອາຊຽນ ກ່ຽວກັບຄວາມໝັ້ນຄົງທາງນ້ຳ ໃຫ້ໄດ້ພາຍໃນປີ 2025 ໂດຍການຮັດແໜ້ນ ສາຍພົວພັນການຮ່ວມມື ແລະ ການປະສານງານ.

ກອງປະຊຸມຄັ້ງປະຖົມມະລຶກນີ້ ໄດ້ເນັ້ນໜັກໃສ່ ການແລກປ່ຽນ ແລະ ວິທີການແກ້ໄຂບັນຫາ ທາງດ້ານວິຊາການລະຫວ່າງ ບັນດາຜູ້ສ້າງນະໂຍບາຍ ແລະ ບັນດາຜູ້ຊ່ຽວຊານ ໃນອາຊຽນ. ສຳລັບ ກອງປະຊຸມຄັ້ງທີສອງ ອາຊຽນ-ຄມສ ກ່ຽວກັບ ຄວາມໝັ້ນຄົງທາງນ້ຳນັ້ນ ມີແຜນຈະຈັດຂຶ້ນໃນປີ 2023 ເຊິ່ງຈະເນັ້ນໜັກໃສ່ ການສົນທະນາກ່ຽວກັບນະໂຍບາຍ ເຊິ່ງຈະມີຫຼາຍພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ອາຊຽນ ແລະ ຄມສ ຈະຈັດເວທີສົນທະນາກັນໃນຕໍ່ຫນ້າ ເພື່ອພັນຂະຫຍາຍ ບັນດາຄຳແນະນຳອັນພົ້ນເດັ່ນ ທີ່ໄດ້ຈາກກອງປະຊຸມຄັ້ງນີ້ ລົງສູ່ການປະຕິບັດງານດ້ານນະໂຍບາຍຕົວຈິງ.

**-ຈົບຂ່າວ-**

**ຂໍ້ມູນສໍາລັບບັນນາທິການຂ່າວ:**

ອາຊຽນ ປະກອບດ້ວຍ ປະເທດ ບຣູໄນ ດາຣຸສະລາມ, ກໍາປູເຈຍ, ອິນໂດເນເຊຍ, ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ ເຊິ່ງເປັນປະຊາຄົມໜຶ່ງ ທີ່ເຕົ້າໂຮມເຂົ້າກັນ ເພື່ອຈຸດປະສົງ ແລະ ເຈດຕະນາອັນດຽວກັນ ໃນການອາໃສຢູ່ໃນພາກພື້ນແຫ່ງນີ້ ດ້ວຍສັນຕິພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງ, ການຂະຫຍາຍຕົວທາງເສດຖະກິດທີ່ຍືນຍົງ, ຄວາມຈະເລີນຮຸ່ງເຮືອງ ແລະ ຄວາມກ້າວໜ້າທາງສັງຄົມ ແລະ ເພື່ອສົ່ງເສີມ ຜົນປະໂຫຍດ, ອຸດົມການ ແລະ ເປົ້າໝາຍຂອງພາກພື້ນແຫ່ງນີ້. ຂໍ້ມູນເພີ່ມຕື່ມ ສາມາດເບິ່ງໄດ້ໃນ www.asean.org.

ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງແມ່ນໍ້າຂອງຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນໍ້າຂອງ ລະຫວ່າງ ປະເທດກໍາປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນໍ້າ ແລະ ທັງເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນໍ້າ ເພື່ອການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**ຖ້າຕ້ອງການຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**

ທ່ານ ໂສພຽກ ແມ, ພະນັກງານປະຊາສໍາພັນ
ກອງເລຂາ ຄະນະກໍາມາທິການແມ່ນໍ້າຂອງສາກົນ
ອີເມວ: sopheak@mrcmekong.org

ທ່ານນາງ ມັດຕິກາ ລາຣາສະຕິ ຮາບໂຊໂຣ, ພະນັກງານປະຊາສໍາພັນ
ພະແນກປະຊາສໍາພັນຊຸມຊົນ, ກອງເລຂາອາຊຽນ
ໂທລະສັບ: +62-217243372
ອີເມວ: mustika.hapsoro@asean.org

###